ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**************

ກະຊວງການເງິນ

ກົມຄັງເງິນ

1438

ເລກທີ ______/ກງ.ທກ

ນະຄອນຫລວງວຽງຈັນ,ວັນທີ 08 JUN 2005

ແຈ້ງການ

ຮຽນ:ທ່ານ ລັດຖະມົນຕີ ວ່າການກະຊວງກະສິກຳແລະປ່າໄມ້

ເລື່ອງ: ການເປີດບັນຊີເງິນຝາກ ຂອງກອງທຶນພັດທະນາປ່າໄມ້ແລະຊັບພະຍາກອນປ່າໄມ້

- ອີງຕາມດຳລັດຂອງນາຍຍົກລັດຖະມົນຕີ ສະບັບເລກທີ 38/ນຍ,ລົງວັນທີ 21/02/2005 ວ່າດ້ວຍ ກອງທຶນພັດທະນາປ່າໄມ້ແລະຊັບພະຍາກອນປ່າໄມ້.

- ອີງຕາມການມອບໝາຍຈາກຂັ້ນເທິງໃຫ້ຄົ້ນຄ້ວາດ້ານວິຊາການແລະຕາມການຄົ້ນຄ້ວາ,ປຶກສາຫາລືນັ້ນ ເພື່ອໃຫ້ກະຊວງການເງິນສາມາດກວດກາແລະຄຸ້ມຄອງການເຄື່ອນໄຫວດ້ານລາຍຮັບ-ລາຍຈ່າຍຂອງກອງທຶນໄດ້ສະດວກແລະຖືກຕ້ອງຕາມມາດຕາທີ 12 ຂອງດຳລັດສະບັບ ເລກທີ 38/ນຍ, ລົງວັນທີ 21/02/2005.

ກົມຄັງເງິນຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ:ກ່ຽວກັບການເປີດບັນຊີເງິນຝາກຂອງກອງທຶນພັດທະນາປ່າໄມ້ແລະຊັບພະຍາກອນປ່າໄມ້ ຢູ່ທະນາຄານ ນັ້ນ ກົມຄັງເງິນຈະເປັນຜູ້ເປີດໃຫ້ ພ້ອມທັງເປັນຜູ້ຖືບັນຊີດັ່ງກ່າວ ແລະທຸກໆລາຍຮັບ-ລາຍຈ່າຍຂອງກອງທຶນ ຕ້ອງຜ່ານບັນຊີເງິນຝາກບ່ອນດຽວ

ດັ່ງນັ້ນ,ຈຶ່ງໄດ້ແຈ້ງມາຍັງທ່ານຊາບແລະໃຫ້ກອງທຶນພັດທະນາປ່າໄມ້ແລະຊັບພະຍາກອນປ່າໄມ້ ປະຕິບັດ ຕາມນີ້ດ້ວຍ.

ຫົວໜ້າກົມຄັງເງິນ

ບຸນທົງ ແກ້ວມະຫາວົງ